# ໂປຣແກຣມ ອໍຣະມະນີ ສໍາລັບໃຊ້ຂຽນແມ່ພິມລາວຢູນິໂກດ

ອໍຣະມະນີ ໒໐໐໕ ແມ່ນແຜງແມ່ພິມຫລືແປ້ນພິມລາວແບບໃຫມ່ ທີ່ມີແຕ່ ບັນດາ ພະຍັນຊນະເປັນຄູ່ກັນເອງ ແລະ ບັນດາສຣະກໍເປັນ ຄູ່ກັນກັບຈໍາພວກສຣະນັ້ນເອງ[1] ທັງນີ້ກໍເພື່ອອໍານວຍຄວາມ-ສະດວກໃນການຈົດຈໍາບ່ອນຢູ່ຂອງລູກດີດແຕ່ລະລູກ ຍ້ອນວ່າ ການທ້ອນໂຮມແບບນີ້ ພາໃຫ້ຈໍານວນຄູ່ລູກດີດລາວນ້ອຍລົງກວ່າເກົ່າ ແລະ ສາມາດບັນຈຸຢູ່ໃນຈໍານວນລູກດີດລາຕິນ ໒໖ ລູກໄດ້ຫມົດທຸກລູກຢ່າງສົ້ນເຊີງ ໂດຍທີ່ບໍ່ໄດ້ເອົາອັກສອນລາວຕົວໃດໆເຂົ້າໄປປະປົນໃສ່ກັບບັນດາເຄື່ອງຫມາຍອື່ນຕໍ່ໄປ

ພົກ ອໍຣະມະນີ ໒໐໐໕ ປະກອບດ້ວຍ (Oramany 2005.exe package) :

໑- ແມ່ພິມອັນມີຊື່ວ່າ ມະນີເດຊ [Manideth.ttf] ທີ່ຖືກກົດເລກເຂົ້າເປັນ ຢູນິໂກດ[Unicode]

໒- ແຜງແມ່ພິມລາວ ຫລື ແປ້ນພິມ ທີ່ທ່ານສາມາດຂຽນ ຕາມການຈັດຂອງແຜງ ອໍຣະມະນີ

໓- ແຜງແມ່ພິມລາວ ຫລື ແປ້ນພິມ ທີ່ທ່ານສາມາດເປີດຂຶ້ນໃຊ້ບົນຈໍໄດ້ (Visual keyboard)

໔- ທ່ານສາມາດໃຊ້ແຜງອັນນີ້ຂຽນຫນັງສືລາວທີ່ໃຊ້ແມ່ພິມຢູນິໂກດຊນິດໃດກໍໄດ້ເຫມືອນກັນ

## ວິທີການໃຊ້ ອໍຣະມະນີ ໒໐໐໕

ຫລັງຈາກການສາກແມ່ພິມ Oramany 2005.exe ລົງມາອັດປະໄວ້ໃນຄອມພິວເຕີຂອງທ່ານຮຽບຮ້ອຍແລ້ວ ກ່ອນທ່ານຈະຂຽນເປັນພາສາລາວໄດ້ ທ່ານຕ້ອງ:

໑- (ທະວີດີກ) ດີກໄວໆສອງເທື່ອໃສ່ Oramany 2005.exe ເພື່ອຕິດຕັ້ງມັນ (ທະວີ = ສອງ)

໒- ຫລັງຈາກຕິດຕັ້ງມັນຮຽບຮ້ອຍແລ້ວ ມອດຄອມພິວເຕີຂອງທ່ານ ແລ້ວຈິ່ງເປີດໃຫມ່ ໃນເມື່ອຄອມພິວເຕີຂອງທ່ານເປີດຮຽບຮ້ອຍແລ້ວ ທ່ານຄວນຈະໄດ້ເຫັນ ເກົ(icône, icon)[2] ຂອງໂປຣແກຣມ ອໍຣະມະນີ ອັນນ້ອຍໆອັນນຶ່ງ ປະກົດຢູ່ເບື້ອງລຸ່ມກ້ຳຂວາຂອງຈໍ ( barre d'état, status bar (ລໍາສະພາບ ຫລື ລໍາພາວະ(?) )

໓- ດີກໃສ່ເກົໂຕນັ້ນ (K) ແລ້ວຈິ່ງຂຶ້ນໄປດີກໃສ່ Oramany 2005 (ຫລັງຈາກນີ້ ເກົຈະປ່ຽນສີມາເປັນສີຂຽວເຫລືອງ ໃນເມື່ອທ່ານເຫັນອັກສອນ «O» ປະກົດຂຶ້ນໃນເກົສີຂຽວເຫລືອງແລ້ວ ທ່ານກໍສາມາດຂຽນພາສາລາວໄດ້ຢ່າງສະບາຍ)

ຫາກແຕ່ວ່າ ທ່ານຕ້ອງຮູ້ຈັກຕົວອັກສອນທີ່ທ່ານຕ້ອງການຕີມັນອອກມານັ້ນ ບັນທົມຢູ່ບົນລູກດີດລູກໃດກັນແທ້ ສໍາລັບເຣື່ອງນີ້ ທ່ານສາມາດເປີດແຜງບົນຈໍຂຶ້ນໄວ້ໃຊ້ໄດ້ (clavier visuel, Visual keyboard) ເພື່ອຄວາມສະດວກ ດັ່ງນີ້ ຄື

໓- ດັກໃສ່ເກົ ອໍຣະມະນີ ໒໐໐໕ ເບື້ອງລຸ່ມກ້ຳຂວາ (ເກົ = icône, icon)

໔- ດີກໃສ່ຫົວຫນູຂ້າງຂວາ ແລ້ວຈິ່ງໄປດີກໃສ່ Visual keyboard ( [ສົກຂີແຜງ](?) )

໕- ດີກໃສ່ເກົຂອງໂປຣແກຣມ [K] ແລ້ວຈິ່ງຂຶ້ນໄປດີກໃສ່ Oramany 2005[ອໍຣະມະນີ ໒໐໐໕]

໖- ດີກໃສ່ [Shift] ໃນ Visual keyboard ຖ້າຍັງບໍ່ທັນເຫັນຫນັງສືລາວເທື່ອ (ແຕ່ວ່າ ຕ້ອງໃຫ້ Visual keyboard ປະກົດອອກມາກ່ອນ ແລະ ອັກສອນ «O» ກໍໃຫ້ປະກົດທັບ ເກົສີຂຽວເຫລືອງ ພ້ອມໆກັນໄປເລີຍ ຈິ່ງຈະຂຽນພາສາລາວໄດ້

---

໑ ເບິ່ງຫນັງສື ແຜງແມ່ພິມລາວ - (Refonte d'un clavier lao) ໂດຍ ຄໍາແພວ ພູເພັຊຣ໌ລິນທອງ ຄ.ສ ໒໐໐໗ ນ້ອຍ ບາສີ (ລິຂດິດ) ແຫ່ງເມືອງປາຣີສ໌ ທີ່ປະເທດຝຣັ່ງ

໒ ເກົ ນ. ເກົເປັນຄໍາມູນ ຊຶ່ງຄໍາມູນແມ່ນຄໍາລາວແທ້ໆທີ່ມີແຕ່ພຍາງດຽວເທົ່ານັ້ນ ແລະ ແປວ່າ ທຸງ

# ໂປຣແກຣມ ອໍຣະມະນີ ສຳລັບໃຊ້ຂຽນແມ່ພິມລາວຢູນີກົດ

໗- ເປີດໂປຣແກຣມຮຽບຮຽງຫນັງສື(Traitement de texte, word processing) ຫລື ໂປຣແກຣມຊນິດໃດຊນິດນຶ່ງທີ່ໃຊ້ຂຽນຫນັງສືລາວໄດ້ ແລ້ວທ່ານຈຶ່ງຈະເຫັນ ອັກສອນລາວຕ່າງໆປະກົດອອກມາ ໃນແຜງບົນຈໍ ຄື Visual keyboard

ແຕ່ຢ່າລືມວ່າ ກ່ອນຈະຂຽນສຣະ ແ◌ ໄດ້ ທ່ານຕ້ອງຕີສຣະ ເ◌ ສອງເທື່ອສຳລັບແຜງ ອໍຣະມະນີ

ດ້ວຍເຫດນີ້ ແຜງແມ່ພິມລາວ ອໍຣະມະນີ ຈະນຳຄວາມສະດວກໃຫ້ແກ່ບັນດາທ່ານທີ່ມີອາຍຸສູງ ແລະ ບັນດາເດັກເລັກເດັກນ້ອຍທັງຫລາຍ ອີກປະການນຶ່ງ ຖ້າທ່ານບໍ່ມັກຕົວອັກສອນມະນີເດຊ ທ່ານສາມາດປ່ຽນຕົວອັກສອນໃຫມ່ຫລືປ່ຽນແມ່ພິມຊນິດໃຫມ່ກໍໄດ້ ຫລັງຈາກທ່ານຕີຫນັງສືຂອງທ່ານຮຽບຮ້ອຍແລ້ວ ຍ້ອນວ່າ ແມ່ພິມຊນິດ ຢູນີກົດ[Unicode] ມີເລກປະຈຳຕົວແບບຕາຍຕົວເປັນຂອງຕົນເອງໂດຍບໍ່ໄດ້ອາໄສບ່ອນຢູ່ຂອງອັກສອນລາຕິນຕົວອື່ນໆ ຫມາຍຄວາມວ່າ ການແລກປ່ຽນຫນັງສືລາວກໍເປັນໄປໄດ້ດັ່ງຄິດ ພຽງແຕ່ປ່ຽນແມ່ພິມລາວຊນິດຢູນີກົດ ກໍພຽງພໍກັບຄວາມຕ້ອງການ

ຖ້າທ່ານມີຈຸດປະສົງໃຊ້ແມ່ພິມຊນິດ ມະນີເດຊ[Manideth.ttf] ເພື່ອຂຽນຫນ້າເວັບໄຊຕ໌ຕ່າງໆ ຂອງທ່ານ ທ່ານຄວນຕື່ມໃສ່ແບບນີ້ ຄື <span style="font-family: MANIDETH, Saysettha OT, Phetsarath OT;"> ເພື່ອໃຫ້ Protocole HTML ສາມາດອ່ານແມ່ພິມ MANIDETH ກ່ອນຫມູ່ ຖ້າວ່າ ແມ່ພິມ MANIDETH ບໍ່ມີຢູ່ໃນຣະບົບຄອມພິວເຕີຂອງທ່ານ ມັນຈະໄປຊອກຫາແມ່ພິມຊນິດຕໍ່ໄປ ດັ່ງ Saysethha OT ແລະຖ້າວ່າແມ່ພິມຊນິດນີ້ບໍ່ມີ ມັນຈະໄປຊອກຫາແມ່ພິມຊນິດຕໍ່ໄປ ຄື Phetsarath OT

ສຳລັບເວັບໄຊຕ໌ http://laocom.free.fr ແມ່ນຂຽນແບບນີ້ເພື່ອໃຫ້ຜູ່ທີ່ບໍ່ມີແມ່ພິມບາງຊນິດສາມາດອ່ານເວັບໄຊຕ໌ໃຍນີ້ໄດ້ຢ່າງສະບາຍ

ທ່ານສາມາດໄປເອົາໂປຣແກຣມ Oramany 2005 ສາກລິງມາໄວ້ຂຽນຫນັງສືລາວ ທີ່ໃຊ້ແມ່ພິມຢູນີກົດ[Unicode] ທຸກຊນິດໄດ້ທີ່ http://laocom.free.fr ໃນຫົວຂໍ້ « ຫນັງສືລາວ ຢູນີກົດ » ຫລັງຈາກຫົວຂໍ້ « ສື່ມະຕິກ » ກ້ຳຊ້າຍ (ສີຂຽວ) ແລະ ທ່ານຍັງສາມາດໃຊ້ໂປຣແກຣມໂຕນີ້ ຂຽນຫນັງສືລາວ ກັບແມ່ພິມລາວຢູນີກົດທຸກໆຊນິດໄດ້

ມະນີເດຊ ເປັນແມ່ພິມທີ່ຂ້າພະເຈົ້າໄດ້ໃຊ້ເວລາແຕ້ມເດືອນເຄິ່ງ ຈຶ່ງສຳເຣັດ ມື້ລະແປດຊົ່ວໂມງເຕັມ ແລະ ຍັງຈະໄດ້ດັດແປງອັກສອນລາຕິນໃຫມ່ ພ້ອມທັງຈະເສີມເຄື່ອງຫມາຍທີ່ເຮົາມັກໃຊ້ກັນຢູ່ເລື້ອຍໆ ເພື່ອເປັນການຟື້ນຟູພາສາລາວພ້ອມທັງນັກຂຽນຫນັງສືລາວທັງຫລາຍ ຂ້າພະເຈົ້າຈຶ່ງໄດ້ຕັດສິນໃຈເອົາແມ່ພິມຂອງຂ້າພະເຈົ້າຊນິດນີ້ອອກມາໃສ່ໃນເວັບໄຊຕ໌ (ບໍ່ແມ່ນແມ່ພິມທີ່ໃຊ້ຂຽນຫນັງສືນີ້)

ໃນຂັ້ນຕໍ່ໄປ ຂ້າພະເຈົ້າຈະເອົາແມ່ພິມຂອງຂ້າພະເຈົ້າທຸກໆຊນິດ ອອກມາໃສ່ໃນເວັບໄຊຕ໌ ແຕ່ບໍ່ໄດ້ຫມາຍຄວາມວ່າ ແມ່ພິມຂອງຂ້າພະເຈົ້າຄັກກວ່າຂອງຜູ່ອື່ນ ກົງກັນຂ້າມ ບາງທ່ານອາດຈະບໍ່ມັກມັນຊ້ຳ

ແດ່ທ່ານທຸກຄົນທີ່ພຍາຍາມຂຽນເປັນພາສາລາວແລະໃຊ້ພາສາລາວໃຫ້ເປັນປໂຍດ

ຄຳແພວ ພູເພັຊຣ໌ລິນທອງ
Khamphéo Phouphetlinthong

ເມື່ອວັນທີ ໐໗-໐໕-໒໐໐໗ ເດືອນ ພຶສພາ ພ.ສ. ໒໕໕໐ ແຫ່ງເມືອງ ປາຣີສ໌ ທີ່ປະເທດຝຣັ່ງ